ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----=== 000 ===-----

ລັດວິສາຫະກິດໂທລະຄົມລາວ

ເລກທີ 2395 ../ລທລ

ວັນທີ 23 JUN 2005

# ຂໍ້ກຳນົດ

## ຂອງລັດວິສາຫະກິດໂທລະຄົມລາວ

## ວ່າດ້ວຍການນຳໃຊ້ພາຫະນະ ( ລົດໃຫຍ່ ) ປະຈຳ ລທລ ສາຂາ ແລະ ສູນໂທລະຄົມແຂວງ.

- ອີງຕາມລະບຽບການນຳໃຊ້ພາຫະນະຂອງລັດວິສາຫະກິດທລະຄົມລາວ ວາງອອກ.
- ອີງຕາມການເຫັນດີ ຂອງຄະນະອຳນວຍການ ລັດວິສາຫະກິດ ໂທລະຄົມລາວ, ລົງວັນທີ 20 / 06 / 05.

## ຜູ້ອຳນວຍການໃຫຍ່ໄດ້ອອກຂໍ້ກຳນົດ ດັ່ງລຸ່ມນີ້:

ມາດຕາ 1: **ຄຳນິຍາມ:**

ພາຫະນະ ແມ່ນຊັບສິນຂອງ ລທລ ແລະ ຢູ່ພາຍໃຕ້ການຄຸ້ມຄອງ ນຳໃຊ້ ຂອງ ລທລ.

ມາດຕາ 2: **ຂອບເຂດການນຳໃຊ້ພາຫະນະ:**

2.1. ພາຫະນະ ທີ່ປະກອບໃຫ້ ລທລ ສາຂາ ແລະ ສູນໂທລະຄົມ ບັນດາແຂວງ ແມ່ນສຳລັບ ແລ່ນຮັບໃຊ້ວຽກງານວິຊາສະເພາະ ຢູ່ໃນຂອບເຂດທີ່ຕົນຮັບຜິດຊອບ.

2.2. ຮັບໃຊ້ວິຊາສະເພາະໃນໂມງການ ແລະ ເວລາເກີດເຫດການສຸກເສີນຕ່າງໆທາງດ້ານເຄືອຂ່າຍໂທລະຄົມ ກໍຄືວຽກລວມ ຂອງ ລທລ ສາຂາແຂວງ ຫຼື ສູນໂທລະຄົມແຂວງ.

2.3. ເມື່ອ ໝົດໂມງເວລາລັດຖະການ ຫຼື ສຳເລັດການ ແລ່ນຮັບໃຊ້ວຽກງານແລ້ວ ຕ້ອງເອົາມາຈອດໄວ້ສຳນັກງານ ຫຼື ບ່ອນຈອດລົດ ທີ່ມີຄວາມປອດໄພ ຂອງ ລທລ ສາຂາ ຫຼື ສູນ.

2.4. ຄະນະສູນ ຫຼື ພະນັກງານ ບຸກຄົນໃດໜຶ່ງ ບໍ່ມີສິດ ເອົາພາຫະນະ ( ລົດໃຫຍ່ ) ຂັບເມືອເຮືອນ ຫຼືໄປຮັບໃຊ້ສ່ວນຕົວໃນເວລານອກໂມງລັດຖະການ, ມື້ພັກ ຫຼື ວັນເສົາ ແລະ ວັນອາທິດ.

2.5. ຫົວໜ້າອຳນວຍການ ລທລ ສາຂາ ແຂວງ ມີສິດນຳໃຊ້ພາຫະນະ ( ລົດໃຫຍ່ ) ໃນເວລານອກໂມງລັດຖະການ ເພື່ອຂັບຂີ່ທ່ຽວການ. ສຳລັບໃນໂມງລັດຖະການ ແມ່ນໃຫ້ເອົານຳໃຊ້ວຽກງານລວມ.

ມາດຕາ 3: **ການຂັບຂີ່ ແລະ ບຳລຸງຮັກສາພາຫະນະ:**

3.1. ການຂັບລົດ ອອກໄປປະຕິບັດໜ້າທີ່ ວິຊາສະເພາະ ແຕ່ລະເທື່ອ ຕ້ອງແມ່ນ ພະນັກງານຂັບລົດ, ຖ້າແມ່ນວິຊາການ ກໍຕ້ອງມີໃບຂັບຂີ່ ແລະ ໄດ້ຮັບການຕົກລົງ ຈາກ ລທລ ຢ່າງເປັນທາງການ ຈຶ່ງອະນຸຍາດໃຫ້ຂັບໄດ້.

3.2. ພະນັກງານຂັບລົດ ມີໜ້າທີ່ ກວດກາ ແລະ ບຳລຸງຮັກສາພາຫະນະ ຢູ່ສະເໝີ ( ທາງດ້ານເອກະສານ, ສະພາບເຕັກນິກ ແລະ ຄວາມສະອາດ ຈົບງາມ ຂອງພາຫະນະ ). ສາມາດ ສ້ອມແປງ ແກ້ໄຂ ສຸກເສີນໄດ້.

3.3. ເມື່ອພາຫະນະ ມີການເປ່ເພ ຫຼື ໃຊ້ງານ ບໍ່ໄດ້ ໂດຍບໍ່ມີຄວາມສາມາດສ້ອມແປງເອົາເອງໄດ້ ຕ້ອງສະເໜີ ຂໍອານຸມັດສ້ອມແປງ ແລະປ່ຽນຖ່າຍ ອາໄຫຼ່ ຈາກ ພາກສ່ວນຄຸ້ມຄອງພາຫະນະ, ພະແນກບໍລິຫານ ຂອງ ລທລ ສູນກາງ, ໂດຍມີການຢັ້ງຢືນ ຈາກ ຫົວໜ້າອຳນວຍການ ລທລ ສາຂາ ຫຼື ຫົວໜ້າສູນ ຄັກແນ່.

ມາດຕາ 4: **ການຄຸ້ມຄອງພາຫະນະ ແລະນ້ຳມັນ:**

4.1. ແຕ່ລະວັນ ກ່ອນການອອກລົດ ໄປປະຕິບັດວຽກງານ ຫຼື ໄປປະຕິບັດວຽກງານມາແລ້ວ ພະນັກງານຂັບລົດ ຕ້ອງກວດກາ ສະພາບເຕັກນິກ ຂອງລົດ, ນ້ຳມັນເຄື່ອງ ແລະ ນ້ຳມັນລົດ.

4.2. ການບັນທຸກ ຫຼື ການໃຊ້ງານລົດ ຕ້ອງໃຫ້ຖືກຕາມສະເປັກເຕັກນິກຂອງລົດ ທີ່ກຳນົດໄວ້.

4.3. ພະນັກງານຂັບລົດ ຕ້ອງໄດ້ ບັນທຶກການນຳໃຊ້ພາຫະນະ ໃນແຕ່ລະຄັ້ງ ລົງໃສ່ປຶ້ມຕິດຕາມລົດ.

4.4. ພະນັກງານຂັບລົດ ຕ້ອງໄດ້ ຕິດຕາມ ບັນທຶການໃສ່ນ້ຳມັນລົດ ແລະ ນ້ຳມັນເຄື່ອງ ພ້ອມທັງເກັບຮັກສາໃບຮັບເງິນ ເພື່ອລາຍງານ ຂໍຖອນເງິນຄືນ ຕາມລະບຽບການ ຂອງ ລທລ ວາງອອກ.

ມາດຕາ 5: **ຄວາມຮັບຜິດຊອບ ແລະ ການປົກປັກຮັກສາ ພາຫະນະ:**

4.1. ຄະນະອຳນວຍການ ລທລ ສາຂາ, ຄະນະສູນ ໂທລະຄົມແຂວງ ມີໜ້າທີ່ປົກຮັກສາ ພາຫະນະ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ບໍ່ໃຫ້ເປ່ເພ ຫຼື ຕົກເຮ່ຍເສຍຫາຍ ໂດຍບໍ່ມີເຫດຜົນ.

4.2. ພະນັກງານຂັບລົດ ຕ້ອງມີຄວາມຮັບຜິດຊອບສູງໃນການຂັບຂີ່ ແລະ ຮັບປະກັນ ຄວາມປອດໄພທາງດ້ານຊີວິດ ແລະ ຊັບສິນ.

4.3. ການຈອດລົດ ຫຼື ມ້ຽນລົດ ແຕ່ລະເທື່ອ ພະນັກງານຂັບລົດ ຕ້ອງໃສ່ກຸນແຈປະຕູລົດ ແລະ ຈອດໄວ້ບ່ອນທີ່ມີຄວາມປອດໄພສູງ.

4.4. ພະນັກງານຂັບລົດ ຕ້ອງຮັບຜິດຊອບ ຕໍ່ທຸກກໍລະນີ ທີ່ເກີດຂຶ້ນ ໃນເມື່ອຕົນ ມີການລະເມີດ ກົດຈາລະຈອນ ຫຼື ກົດໝາຍບ້ານເມືອງ.

ມາດຕາ 6: ບັນດາພະແນກການ, ລທລ ສາຂາ , ສູນໂທລະຄົມແຂວງ ແລະ ພາກສ່ວນກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ພ້ອມກັນປະຕິບັດຂໍ້ກຳນົດສະບັບນີ້ຢ່າງເຂັ້ມງວດ.

ມາດຕາ 7: ຂໍ້ກຳນົດສະບັບນີ້ມີຜົນບັງຄັບໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຜູ້ອຳນວຍການໃຫຍ່**

ລັດວິສາຫະກິດ ໂທລະຄົມລາວ Enterprise of Telecommunications LAO ນະຄອນຫລວງວຽງຈັນ

ປະດັບເພັດ ໄຊຍະໂຄດ